ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ນະຄອນຫຼວງວຽງຈັນ

ເລກທີ 010 /ຈນວ

ລົງວັນທີ 03 SEP 2013

# ຄຳສັ່ງແນະນຳ

## ວ່າດ້ວຍການຄຸ້ມຄອງຄວາມເປັນລະບຽບຮຽບຮ້ອຍໃນການຈະລາຈອນຕາມເສັ້ນທາງ, ການຄຸ້ມຄອງ ການປຸກສ້າງ-ສ້ອມແປງ ແລະ ການຕິດຕັ້ງປ້າຍໂຄສະນາຕ່າງໆ ໃນນະຄອນຫຼວງວຽງຈັນ.

ເຖິງ: - ທ່ານເຈົ້າເມືອງ 9 ເມືອງ ນະຄອນຫຼວງວຽງຈັນ.

- ທ່ານຫົວໜ້າພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ.
- ທ່ານຫົວໜ້າພະແນກການ, ອົງການທຽບເທົ່າ, ທ່ານຫົວໜ້າຫ້ອງການ, ຜູ້ອຳນວຍການວິສາຫະກິດລັດ ແລະ ເອກະຊົນ, ນິຕິບຸກຄົນ ຕະຫຼອດຮອດປະຊາຊົນ ບັນດາເຜົ່າ ໃນທົ່ວນະຄອນຫຼວງວຽງຈັນ.

- ອີງຕາມ: ກົດໝາຍວ່າດ້ວຍການຈະລາຈອນທາງບົກ(ສະບັບປັບປຸງໃໝ່) ສະບັບເລກທີ 23/ຫສຊ, ລົງວັນທີ 12 ທັນວາ 2013.
- ອີງຕາມ: ດຳລັດຂອງທ່ານນາຍົກລັດຖະມົນຕີ ສະບັບເລກທີ 188/ນຍ, ລົງວັນທີ 03 ກໍລະກົດ 2007.
- ອີງຕາມ: ຂໍ້ຕົກລົງຂອງທ່ານລັດຖະມົນຕີວ່າການກະຊວງຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ສະບັບເລກທີ 7681/ຄຂປກ, ລົງວັນທີ 29 ມິຖຸນາ 2005.
- ອີງຕາມ: ການຕົກລົງເຫັນດີຂອງກອງປະຊຸມອົງການປົກຄອງນະຄອນຫຼວງວຽງຈັນ ປະຈຳເດືອນສິງຫາ ໃນຄັ້ງວັນທີ 6 ສິງຫາ 2013.

ເນື່ອງຈາກວ່າ ການປະຕິບັດ ກົດໝາຍ ວ່າດ້ວຍ ການຈະລາຈອນ, ກົດໝາຍ ວ່າດ້ວຍ ຜັງເມືອງ, ດຳລັດ ຂອງ ນາຍົກລັດຖະມົນຕີ, ຂໍ້ຕົກລົງຕ່າງໆ ຂອງ ລັດຖະມົນຕີ ບໍ່ເຫັນດີເທົ່າທີ່ຄວນ. ເປັນຕົ້ນ: ການໃຊ້ລົດ ໃຊ້ຖະໜົນ, ເກີດມີອຸບັດຕິເຫດຕາມທ້ອງຖະໜົນຫຼາຍຂຶ້ນ, ຜູ້ຂັບຂີ່, ຜູ້ສັນຈອນ ລ່ວງລະເມີດການສັນຈອນ, ການປຸກສ້າງ, ການສ້ອມແປງ ບໍ່ເປັນໄປຕາມທີ່ໄດ້ກຳນົດ, ການຂົນສົ່ງຫີນຊາຍ, ການຖົມດິນ ເພື່ອປຸກສ້າງ ອັນໄດ້ສ້າງຄວາມເປິະເປື້ອນໃສ່ຖະໜົນຫົນທາງ ປະຊາຊົນຈຳນວນໜຶ່ງ ກໍ່ຍັງບໍ່ທັນເຂົ້າໃຈເລິກເຊິ່ງ ຕໍ່ກັບລະບຽບກົດໝາຍ ການຄຸ້ມຄອງຕິດຕັ້ງປ້າຍໂຄສະນາ ບໍ່ທັນໄດ້ດີເທົ່າທີ່ຄວນ ເຊິ່ງເຮັດໃຫ້ເກີດມີບັນຫາ ປະກົດການຫຍໍ້ທໍ້ຫຼາຍຢ່າງ ເກີດຂຶ້ນໃນສັງຄົມປັດຈຸບັນ.

ດັ່ງນັ້ນ, ເພື່ອເຮັດໃຫ້ວຽກງານທີ່ກ່າວມານັ້ນ ເຂົ້າສູ່ຄວາມເປັນລະບຽບຮຽບຮ້ອຍ, ເຮັດໃຫ້ຕົວເມືອງມີຄວາມສະອາດ ຈົບງາມ, ມີຄວາມສະຫງົບ, ປອດໄພ ເຮັດໃຫ້ສັງຄົມມີຄວາມສີວິໄລ ແລະ ເປັນນະຄອນຫຼວງທີ່ໜ້າຢູ່.

## ເຈົ້າຄອງນະຄອນຫຼວງວຽງຈັນ ອອກຄຳສັ່ງແນະນຳ:

## 1. ການກະທຳເພື່ອບໍ່ເຮັດໃຫ້ເສັ້ນທາງເປິະເປື້ອນ.

1.1. ການຂົນສົ່ງຫີນແຮ່-ຊາຍ ແລະ ດິນປະເພດຕ່າງໆ ຕ້ອງມີຜ້າບັດປົກຫຸ້ມເປັນຢ່າງດີທຸກຄັ້ງ, ຖ້າຫາກຜູ້ຂົນສົ່ງ ໄດ້ສ້າງຄວາມເປິະເປື້ອນໃສ່ຖະໜົນຕ້ອງ ໄດ້ເຮັດອານາໄມຢ່າງຮີບດ່ວນ ຖ້າລະເມີດຈະຖືກປັບໃໝຕາມດຳລັດ 188/ນຍ, ລົງວັນທີ 03/07/2007. ຂອງມາດຕາ38 ວ່າດ້ວຍ ການສ້າງຄວາມເປິເປື້ອນໃສ່ທາງຫຼວງ ຄື: ຈະຖືກປັບໃໝ 100,000 ກີບຕໍ່ຖ້ຽວຕໍ່ຄັນ ພ້ອມທັງຮັບຜິດຊອບຄ່າໃຊ້ຈ່າຍໃນການທຳຄວາມສະອາດຕອນທາງ ບ່ອນທີ່ຕົນໄດ້ເຮັດໃຫ ເປິະເປື້ອນນັ້ນ.

1.2. ການຂົນສົ່ງຫີນແຮ່-ຊາຍ ແລະ ດິນ ປະເພດຕ່າງໆ, ການຖົມດິນ ກ່ອນຈະເຂົ້າສູ່ຕົວເມືອງ ແລະ ເຂົ້າສູ່ເສັ້ນທາງໃຫຍ່ ຕ້ອງໄດ້ອານາໄມຕີນລົດທຸກຄັ້ງ ລວມທັງລົດຍູ້ດິນ, ລົດໂມ້ ປູນທີ່ຮັບໃຊ້ການກໍ່ສ້າງ. ຖ້າຫາກທາງເຂົ້າ-ອອກ ຫລື ເສັ້ນທາງ ໃກ້ຄຽງທາກ ເປິະເປື້ອນຕ້ອງລ້າງ ແລະ ອານາໄມໂດຍໄວ. ມອບໃຫ້ພາກສ່ວນທີ່ ອານຸ

ຍາດ ຕ້ອງລົງຕິດຕາມຢ່າງໃກ້ສິດ ເພື່ອແນະນຳ ແລະ ກວດກາ, ຖ້າຫາກບໍ່ປະຕິບັດຕາມຕ້ອງໃຫ້ຢຸດຕິກິດຈະການໄວ້ກ່ອນ.

1.3. ການຂຸດຄົ້ນ ຫີນແຮ່-ຊາຍ ແລະ ດິນປະເພດຕ່າງໆ ຕ້ອງປະຕິບັດ ຕາມລະບຽບການກ່ຽວກັບ ການຄຸ້ມຄອງ, ການຂຸດຄົ້ນ ຫີນແຮ່ - ຊາຍ ແລະ ດິນ ປະເພດຕ່າງໆ ຂອງ ເຈົ້າຄອງ ນະຄອນຫລວງວຽງຈັນ ສະບັບເລກທີ 387/ຈນວ, ລົງວັນທີ 26/11/2008 ຢ່າງເຂັ້ມງວດ.

## 2. ການຄຸ້ມຄອງພາຫະນະ ແລະ ຈະລາຈອນໃນຕົວເມືອງ.

2.1. ຫ້າມລົດບັນທຸກໜັກ, ລົດພວງ, ລົດລາກ ແລ່ນເຂົ້າຕົວເມືອງ ໃນເວລາທີ່ໄດ້ກຳນົດໄວ້ໃນ ແຈ້ງການ ຂອງ ເຈົ້າຄອງນະຄອນຫລວງວຽງຈັນ ສະບັບເລກທີ 274/ຈນວ, ລົງວັນທີ 20/09 /2011 ຢ່າງເຂັ້ມງວດ.

- ຫ້າມລົດບັນທຸກໜັກແລ່ນເຂົ້າຕົວເມືອງຕາມສາຍທາງຫຼັກດັ່ງນີ້:ຖະໜົນສຸພານຸວົງ, ເສດຖາທິລາດ, ເຈົ້າຟ້າງຸ່ມ, ແຄມຂອງ, ລ້ານຊ້າງ, ໜອງບອນ, 23ສິງຫາ, ດົງປ່າລານ, ມິດຕະພາບລາວ-ໄທ, ອາຊຽນ, ໂພນຕ້ອງ-ດົງໂດກ, ຖະໜົນ ໄກສອນພົມວິຫານ(ແຕ່ສີ່ແຍກໄຟແດງຫຼັກ 6 ຫາ ປະຕູໄຊ).

2.2. ລົດຂົນສົ່ງສິນຄ້າປະເພດວັດສະດຸກໍ່ສ້າງ ເຂົ້າຮ້ານຄ້າ ຢູ່ຂອບເຂດເສັ້ນທາງທີ່ໄດ້ລະບຸໄວ້ໃນ 2.1 ຕ້ອງໄດ້ນຳໃຊ້ລົດບັນທຸກຂະໜາດນ້ອຍ(07 ໂຕນ ລົງມາ); ການປະຕິບັດ ໂມງເວລາ ການຄຸ່ງນຖ່າຍສິນຄ້າ ຕ້ອງປະຕິບັດຕາມ ດຳລັດ ຂອງ ນາຍົກລັດຖະມົນຕີ ເລກທີ 188/ນຍ, ລົງວັນທີ 03/07/2007 ຢ່າງເຂັ້ມງວດ, ຖ້າຫາກຝ່າຝືນຈະຖືກປັບໄໝຄັ້ງລະ 200,000ກີບ.

2.3. ບໍ່ອານຸຍາດໃຫ້ດັດແປງສະພາບເຕັກນິກລົດຈັກ, ລົດໃຫຍ່ທີ່ອາດກໍ່ໃຫ້ເກີດອຸປະຕິເຫດ ຫລື ສຽງດັງເກີນ ມາດຕະຖານທີ່ອານຸຍາດ, ພາກສ່ວນເຈົ້າໜ້າທີ່ຈະລາຈອນຕ້ອງ ກວດກາສະກັດກັ້ນ ບັນຫາດັ່ງກ່າວຢ່າງເດັດຂາດ.

- ສຽງດັງຂອງເຄື່ອງຈັກທຸກປະເພດ ບໍ່ໃຫ້ເກີນ 100 db (ດີຊີເບວ) ແລະ ບໍ່ອານຸຍາດ ໃຫ້ຮ້ານຕົບແຕ່ງ ເຄື່ອງສຽງ ບໍລິການຕິດຕັ້ງເຄື່ອງສຽງຫລື ຕູ້ລຳໂພງໃຫຍ່ ເກີນຄວນ ໃສ່ລົດໃຫ້ລູກຄ້າ. ໃນ ເວລາ ຂັບຂີ່ລົດໃນ ທ້ອງຖະໜົນຫລວງ ຫ້າມເປີດສຽງດັງເກີນ 100 db( ດີຊີເບວ ) ທີ່ສົ່ງສຽງລົບ ກວນຄົນອື່ນ ນັບທັງກາງເວັນ ແລະ ກາງຄືນ.
- ລົດທຸກປະເພດຕ້ອງໃຫ້ຜ່ານການກວດເຕັກນິກ ຢ່າງເປັນປົກກະຕິ ຖ້າເຫັນວ່າມີ ຄັນດຳເນີນກຳນົດ ຫລື ສະພາບເຕັກນິກບໍ່ໄດ້ມາດຕະຖານ ຕ້ອງໄດ້ສ້ອມແປງ ໃຫ້ຢູ່ໃນສະພາບປົກກະຕິດ ີເສຍກ່ອນ ແລ້ວຈິ່ງ ອອກໃບຢັ້ງ ຢືນຮັບຮ້ອງ ດ້ານ ເຕັກນິກໃຫ້.

3. ເສັ້ນທາງ ສາຍຫຼັກ ທີ່ມີການສັນຈອນ ທິດທາງດຽວ (One way) ທີ່ໄດ້ນຳ ໃຊ້ ປະກອບມີ.

   1. ຖະໜົນ ເສດຖາທິລາດ (ທາງລົງ) ເຊິ່ງເລີ້ມແຕ່ ສວນເຈົ້າຟ້າງຸ່ມ ຫາ 4 ແຍກໄຟແດງ ທາດຂາວ.
   2. ຖະໜົນ ສາມແສນໄທ (ທາງຂຶ້ນ) ເລີ້ມແຕ 4 ແຍກ ໄຟແດງທາງຂາວ ຫາ 3 ແຍກ ສວນເຈົ້າຟ້າງຸ່ມ. ເຊືອມຕໍ່ຖະໜົນສຸພານຸວົງ.

3.1. ເສັ້ນທາງສັນຈອນທິດທາງດຽວ ທີ່ຈັດສັນຂຶ້ນໃໝ່ລວມມີ:

- ຖະໜົນໄກສອນ ຕອນທາງແຕ່ ຄ້ອງສັນຕິພາບ ຫາ ວົງວຽນ ສີ່ຮ້ອຍຫ້າສິບປີ (One way ຂາເຂົ້າ).
- ເສັ້ນທາງ 23 ສິງຫາ ເຊິ່ງເລີ້ມແຕ່ໄຟແດງ ແຈກະຊວງໂຍທາ ຫາ ໄຟແດງ ໜອງ ສະພັງເລນ (One way ຂາອອກ)
- ຖະໜົນຟ້າງຸ່ມ ເລີ້ມແຕ່ສາມແຍກ ບ້ານທາດຂາວ (ທາງເຂດພັດທະນາດອນຈັນ) ຂຶ້ນໄປສິ້ນສຸດຢູ່ 3 ແຍກ ບ້ານວັດຈັນ (ໜ້າຫໍພັກວິທະຍາໄລເຕັກນິກ ປາກປາສັກ) (One way ທາງຂຶ້ນ).

- ຖະໜົນຈັນທະກຸມມານ ເລີ້ມແຕ່ ສາມແຍກໂຮງແຮມລ້ານຊ້າງ ເຖິງ ສີ່ແຍກໄຟອໍານາດ ຖະໜົນ ສາມແສນໄທ (ສີ່ແຍກທາດດໍາ).

3.2 ເສັ້ນທາງສັນຈອນສອງທິດທາງ(Two way) ທີ່ຈັດສັນຂຶ້ນໃໝ່ລວມມີ:

- ເສັ້ນທາງຂົວຫຼວງ ປັ່ບໃຫ້ເປັນເສັ້ນທາງສັນຈອນສອງທິດທາງ ( two way ) .
- ເສັ້ນທາງສີຫອມ ໃຫ້ເປັນເສັ້ນທາງສັນຈອນສອງທິດທາງ ( Two way ) ແລະ ປັບ Phase ໄຟອໍານາດ 5 ແຍກ ໂອດຽນ ໃຫ້ແທດເໝາະກັບການສັນຈອນ ສອງທິດທາງ ( Two way ).
- ນັກຂັບຂີ່ທຸກຄົນທີ່ສັນຈອນໃນຕອນເສັ້ນທາງດັ່ງກ່າວຕ້ອງໄດ້ເຄົາລົບແລະປະຕິບັດຕາມທິດ ຂອງການສັນຈອນຢ່າງເຂັ້ມງວດ.
- ຫ້າມສ້າງເຄື່ອງໝາຍຈະລາຈອນຂຶ້ນມາເອງ ທີ່ເປັນການກີດຂວາງການສັນຈອນ ຖ້າກບຸກຄົນ ຫຼື ພາກສ່ວນໃດລະເມີດຈະໄດ້ຖືກກ່າວເຕືອນ ສຶກສາອົບຮົມ ແລະ ປັບໃໝຕາມດໍາລັດ ເລກທີ 188/ນຍ ລົງວັນທີ 03/07/207ຢ່າງເຂັ້ມງວດ.

3.3. ການວາງວັດສະດຸຮັບໃຊ້ການກໍ່ສ້າງຕ່າງໆ .

- ບຸກຄົນໃດຫາກໄດ້ກອງວັດສະດຸກໍ່ສ້າງເຊັ່ນ: ກອງໄມ້, ກອງຫີນ, ກອງຊາຍ, ກອງດິນ, ກອງເຫລັກ ແລະ ວັດສະດຸອື່ນໆໃສ່ເສັ້ນທາງ, ແຄມທາງ, ທາງຍ່າງ ຫລື ຮ່ອງນໍ້າແຄມທາງ, ການສ້ອມແປງລົດຂອງຮ້ານສ້ອມແປງພາຫະນະ
ເຊິ່ງເປັນການກີດຂວາງ ການສັນ ຈອນ, ແມ່ນຕ້ອງໄດ້ຖືກປັບໃໝ ຕາມດໍາລັດ 188/ນຍ, ພ້ອມທັງຍົກຍ້າຍວັດສະດຸກ່າວ ອອກພາຍໃນບໍ່ເກີນ 3ວັນ.
ຖ້າຫາກກາຍກໍານົດເວລາດັ່ງກ່າວ ຜູ້ລະເມີດຍັງບໍ່ທັນ ຍົກຍ້າຍ ວັດສະດຸກໍ່ສ້າງດັ່ງກ່າວອອກ ເຈົ້າໜ້າທີ່ຈະຕ້ອງໄດ້ປັບໃໝເພີ້ມຕື່ມ ດັ່ງ ດໍາລັດ 188/ນຍ ໄດ້ກໍານົດໄວ້.

ໃນກໍລະນີຫາກເກີດ ອຸບະຕິເຫດ ຍ້ອນວັດສະດຸກໍ່ສ້າງດັ່ງກ່າວເຈົ້າຂອງວັດສະດຸກໍ່ສ້າງ ນັ້ນຕ້ອງ ຮັບຜິດຊອບ ຕໍ່ຜົນເສຍຫາຍ ທີ່ເກີດຂຶ້ນທັງໝົດ.

4. ການຄຸ້ມຄອງ ການປຸກສ້າງ-ສ້ອມແປງ ແລະ ການຖົມດິນ.

4.1ກ່ອນການດຳເນີນການປຸກສ້າງ-ສ້ອມແປງໃຫຍ່ ທຸກປະເພດ, ການຖົມດິນ ຕ້ອງໄດ້ສະເໜີຜ່ານນາຍບ້ານໄປຫາຫ້ອງການ ຍທຂ ເມືອງ-ເຈົ້າເມືອງ, ເມື່ອໄດ້ຮັບອະນຸຍາດແລ້ວ ຈຶ່ງສາມາດລົງມືປະຕິບັດໄດ້.

4.2 ຂັ້ນໃນການແບ່ງຂັ້ນຄຸ້ມຄອງອະນຸຍາດ ປະກອບມີ:

- ພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງ ອອກອະນຸຍາດ ການປຸກສ້າງ-ສ້ອມແປງ ທຸກປະເພດ ທີ່ມີເນື້ອທີ່ໃຊ້ສອຍຫຼາຍກວ່າ 400 ຕາແມັດ ຂຶ້ນໄປ, ການຖົມດິນ ທີ່ມີບໍລິມາດຫຼາຍກວ່າ 2000 ແມັດກ້ອນ ຂຶ້ນໄປ ແລະ ໂຮງງານ ອຸດສາກຳ ປະເພດ 1 ແລະ 2.
- ຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງ ເປັນຜູ້ຄົ້ນຄວ້ານຳສະເໜີ ໃຫ້ ທ່ານ ເຈົ້າເມືອງ ອອກອະນຸຍາດການປຸກສ້າງ-ສ້ອມແປງ, ການຕໍ່ເຕີມ ອາຄານທຸກປະເພດ ທີ່ມີເນື້ອທີ່ໃຊ້ສອຍບໍ່ເກີນ 400 ຕາແມັດ, ການຖົມດິນ ທີ່ມີບໍລິມາດ ບໍ່ເກີນ 2000 ແມັດກ້ອນ ແລະ ໂຮງງານອຸດສາຫະກຳ ປະເພດ 3.
- ທຸກບ້ານ ຕ້ອງໃຫ້ມີໂຍທາທິການ ຂັ້ນບ້ານ ຄົ້ນຄວ້າຢັ້ງຢືນຜ່ານເອກະສານເຂົ້າຮ່ວມໃນການເປັນຄະນະກຳມະການກວດກາສະຖານທີ່ສະເໜີຂໍອະນຸຍາດປຸກສ້າງ ແລະ ການຖົມດິນ, ເປັນເຈົ້າການໃນການກວດກາວຽກງານດັ່ງກ່າວ ເມື່ອເຫັນວ່າ ການປະຕິບັດບໍ່ຖືກຕ້ອງກໍ່ໃຫ້ສັ່ງຢຸດຊົ່ວຄາວ ແລ້ວລາຍງານໃຫ້ຫ້ອງການໂຍທາທິການ ເມືອງ ຫຼື ພະແນກໂຍທາທິການ ນະຄອນຫຼວງ ຮັບຊາບເພື່ອ ແກ້ໄຂຕາມຂັ້ນຕອນຢ່າງທັນການ.

4.3 ການຖົມດິນເພື່ອປຸກສ້າງຕ່າງໆ ຫ້າມບໍ່ໃຫ້ຖົມສູງເກີນກວ່າລະດັບໜ້າທາງ ທີ່ກໍ່ສ້າງສຳເລັດແລ້ວ ໃນລະ ດັບສູງບໍ່ເກີນ 30 ຊັງຕີແມັດ ແລະ ຫ້າມບໍ່ໃຫ້ຖົມຄອງລະບາຍນ້ຳ, ຄອງນ້ຳແຄມທາງ, ຮ່ອງຊົນລະປະທານ, ຈຸດພັກນ້ຳທີ່ມີການກຳນົດໄວ້, ພ້ອມກັນນັ້ນ ການຂົນສົ່ງດິນຖົມ, ຫີນຊາຍ ເພື່ອການກໍ່ສ້າງຕ່າງໆ ແມ່ນບໍ່ໃຫ້ສ້າງຄວາມເປິະເປື້ອນ ແກ່ຖະໜົນຫົນທາງ ຕ້ອງໄດ້ປະຕິບັດຕາມລະບຽບການຢ່າງເຂັ້ມງວດ.

4.4 ການປຸກສ້າງ ບໍ່ໃຫ້ກວມເອົາເຂດສະຫງວນ ຂອງ ທາງ ແລະ ຮ່ອງລະບາຍນ້ຳ ສາທາລະນະ ທີ່ໄດ້ກຳນົດໄວ້ຢ່າງເດັດຂາດ ແລະ ບໍ່ໃຫ້ວາງສິ່ງຂອງກວມເອົາບໍລິເວນທາງຄົນຍ່າງ ຫຼື ແຄມທາງ, ການຕໍ່ເທີບ, ເຖີບ ແຜງລອຍ ທີ່ລ່ວງລ້ຳກວມເອົາເຂດສະຫງວນທາງຖືວ່າມີຄວາມຜິດ, ກໍລະນີເຈົ້າໜ້າທີ່ມີການກວດກາ ພົບເຫັນ ຜູ້ທີ່ລະເມີດຈະຖືກສຶກສາອົບຮົມ, ຖ້າຝ່າຝືນ ກໍ່ຈະເລີກຮື້ອອກໂດຍບໍ່ມີເງື່ອນໄຂ ບໍ່ໄດ້ມີການຊົດເຊີຍ ແຕ່ຢ່າງໃດ.

## 5. ການຄຸ້ມຄອງ ປ້າຍໂຄສະນາ ຕ່າງໆ

5.1 ການຕິດຕັ້ງປ້າຍໂຄສະນາ ທຸກປະເພດ, ບໍ່ວ່າຈະເປັນຂອງພາກສ່ວນ ລັດ ຫຼື ເອກະຊົນກ່ອນການຕິດຕັ້ງຕ້ອງໄດ້ສະເໜີຂໍອະນຸຍາດຕາມຂັ້ນຕອນ ຈາກພາກສ່ວນທີ່ມີສິດ ໃນການຄຸ້ມຄອງ ຄັກແນ່, ເມື່ອໄດ້ຮັບອະນຸຍາດ ທາງດ້ານທີ່ຕັ້ງ ແລະ ເນື້ອໃນແລ້ວ ຈຶ່ງດຳເນີນການຕິດຕັ້ງໄດ້.

5.2 ປ້າຍໂຄສະນາທີ່ຕັ້ງຕາມຖະໜົນ ເສັ້ນທາງຫຼັກຕ່າງໆ ໃນເຂດຕົວເມືອງ ກຳນົດຂະໜາດ ໃຫຍ່ສຸດ ບໍ່ກາຍ 3 ແມັດ x 6 ແມັດ, ຢູ່ເຂດຊານເມືອງ ຫຼື ນອກເມືອງ ອອກໄປໃຫຍ່ສຸດ ບໍ່ໃຫ້ເກີນ 6 ແມັດ X 12 ແມັດ.

5.3 ປ້າຍໂຄສະນາຕິດຕາມໜ້າຮ້ານ ອາຄານຕ່າງໆ ກຳນົດໃຫຍ່ສຸດບໍ່ໃຫ້ເກີນ 3ແມັດ X 6 ແມັດ, ປ້າຍຫ້ອຍຕາມເສົາໄຟ ຂະໜາດບໍ່ໃຫ້ເກີນ 60 ຊັງຕີແມັດ X 150 ຊັງຕີແມັດ.

5.4 ຫ້າມເດັດຂາດບໍ່ໃຫ້ຕິດຕັ້ງປ້າຍໂຄສະນາ, ແຜ່ນຜ້າຂ້າມທາງໃສ່ຖະໜົນໃຫຍ່ ແລະ ທາງຊອຍ ຍົກເວັ້ນ ປ້າຍໂຄສະນາ ຂອງ ທາງລັດຖະການ ແຕ່ກຳນົດໃຫຍ່ສຸດບໍ່ໃຫ້ເກີນ 1 ແມັດ X 10 ແມັດ ພ້ອມນັ້ນ ຫຼັງຈາກ ເສັດພິທີແລ້ວກໍ່ໃຫ້ເກັບກູ້ໄວ້.

5.5 ການຕິດຕັ້ງປ້າຍໂຄສະນາຕ່າງໆ ຕ້ອງໄດ້ຕິດຕັ້ງຕາມຈຸດຕ່າງໆ ແລະ ເສັ້ນທາງທີ່ ອົງການກ່ຽວຂ້ອງເປັນຜູ້ກຳນົດໃຫ້ຄັກແນ່, ຫ້າມບໍ່ໃຫ້ຕິດປ້າຍໂຄສະນາທຸກປະເພດໃສ່ຕົ້ນໄມ້ ຫຼື ບ່ອນສາທາລະນະຕ່າງໆ ໂດຍບໍ່ໄດ້ຮັບອະນຸຍາດ, ບັນດາປ້າຍໂຄສະນາ ທີ່ຕິດຕັ້ງຜິດລະບຽບການ ໃຫ້ພາກສ່ວນ ທີ່ກ່ຽວຂ້ອງຄົ້ນຄວ້າ ພ້ອມກັນຮື້ຖອນອອກໂດຍໄວ.

5.6 ໃນການຄຸ້ມຄອງອອກອະນຸຍາດ ການຕິດຕັ້ງປ້າຍໂຄສະນາຕ່າງໆ ມີດັ່ງນີ້:

- ພະແນກໂຍທາທິການ ແລະ ຂົນສົ່ງ ອອກອະນຸຍາດການຕິດຕັ້ງ ປ້າຍທຸກປະເພດ ລວມທັງປ້າຍເອເລັກໂຕຣນິກ ເຊິ່ງກຳນົດດັ່ງນີ້:

  + ປ້າຍຕິດຕັ້ງຕາມແຄມທາງ ຂະໜາດ 2 x 4 ແມັດຂຶ້ນໄປ.

  + ປ້າຍຕິດຕາມໜ້າຮ້ານ ຂະໜາດ 1 x 2 ແມັດຂຶ້ນໄປ.

  + ປ້າຍຫ້ອຍຕາມເສົາໄຟຕ່າງໆ.

  + ປ້າຍແຜ່ນຜ້າຂ້າມທາງ ຂອງ ທາງລັດຖະການ.

- ຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງ ຄົ້ນຄວ້ານຳສະເໜີ ເຈົ້າເມືອງອອກອະນຸຍາດປ້າຍທຸກຊະນິດ ລວມທັງປ້າຍເອເລັກໂຕຣນິກ ເຊິ່ງກຳນົດດັ່ງນີ້:

  + ປ້າຍຕິດຕັ້ງຕາມແຄມທາງ ມີຂະໜາດບໍ່ເກີນ 2 ແມັດ x 4 ແມັດ.

- ໃຫ້ບັນດາສຳນັກງານ ອົງການ, ພະນັກງານ, ທະຫານ, ຕຳຫລວດ ລວມເຖິງ ພໍ່ແມ່ ປະຊາຊົນ ຈົ່ງໄດ້ຮັບຮູ້, ຈັດຕັ້ງຜັນຂະຫຍາຍ ແລະ ປະຕິບັດ ຕາມ ຄຳແນະນຳສະບັບນີ້ ຢ່າງເຂັ້ມງວດ.
- ຜ່ານການປະຕິບັດຕ້ອງມີການສະຫຼຸບຖອດຖອນບົດຮຽນປັບປຸງແກ້ໄຂບັນຫາໃຫ້ທັນການ.
- ມອບໃຫ້ພະແນກ ໂຍທາທິການ ແລະ ຂົນສົ່ງ ນະຄອນຫລວງວຽງຈັນ ເປັນເຈົ້າການ ໃນການຕິດຕາມ, ກວດກາ ຈັດຕັ້ງປະຕິບັດຕົວຈິງ ແລະ ມີມາດຕະການແກ້ໄຂ, ການກະທຳທີ່ບໍ່ຖືກຕ້ອງ ຢ່າງທັນການ ພ້ອມທັງລາຍງານ ໃຫ້ເຈົ້າຄອງ ຮັບຊາບເປັນປົກກະຕິ.

ຄຳສັ່ງແນະນຳ ສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ເຈົ້າຄອງນະຄອນຫຼວງວຽງຈັນ

ສູກັນ ມະຫາລາດ